**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະປັບປຸງກົງຈັກການຈັດຕັ້ງລັດຖະບານ

ເລກທີ 01 /ຄປກລ

ນະຄອນຫຼວງວຽງຈັນ, ວັນທີ 19 ຕຸລາ 2012

# ຄຳແນະນຳ
## ຂອງຄະນະປັບປຸງກົງຈັກການຈັດຕັ້ງລັດຖະບານ
## ກ່ຽວກັບການກຳນົດລະບົບການຈັດຕັ້ງກົງຈັກ ຢູ່ໃນເມືອງເປົ້າໝາຍທີ່ເຮັດທົດລອງສາມສ້າງ

ເພື່ອສືບຕໍ່ຈັດຕັ້ງປະຕິບັດຕາມ ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກ 050/ຄປຈ, ລົງວັນທີ 13 ມິຖຸນາ 2012 ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 16/ນຍ, ລົງວັນທີ 15 ມິຖຸນາ 2012 ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ(ເອີ້ນລວມວ່າ ສາມສ້າງ) ແລະ ເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງແຂວງ, ນະຄອນຫຼວງ ແລະ ເມືອງ ໃນການປັບປຸງໂຄງປະກອບກົງຈັກຂອງເມືອງເປົ້າໝາຍທົດລອງສາມສ້າງ ໃຫ້ສອດຄ່ອງ ແລະ ທັນກຳນົດເວລາ. ສະນັ້ນ, ຄະນະປັບປຸງກົງຈັກການຈັດຕັ້ງລັດຖະບານ ຈຶ່ງອອກຄຳແນະນຳ ດັ່ງນີ້:

1. **ຈຸດປະສົງ**

ຄຳແນະນຳສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ ແລະ ໂຄງຮ່າງການຈັດຕັ້ງຂອງບັນດາເມືອງທີ່ເຮັດທົດລອງສາມສ້າງ, ເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງແຂວງ, ນະຄອນຫຼວງ ແລະ ເມືອງ ໃນການຄົ້ນຄວ້າ ແລະ ປັບປຸງກົງຈັກການຈັດຕັ້ງຂອງເມືອງ ໃຫ້ຖືກຕ້ອງ ແລະ ມີຄວາມສອດຄ່ອງກັບຕົວຈິງຫຼາຍຂຶ້ນ ແນໃສ່ເຮັດໃຫ້ໂຄງປະກອບກົງຈັກຂອງເມືອງມີຄວາມກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ.

2. **ຂອບເຂດ ແລະ ເປົ້າໝາຍ**

ຄຳແນະນຳສະບັບນີ້ນຳໃຊ້ສຳລັບການປັບປຸງກົງຈັກການຈັດຕັ້ງຂອງບັນດາເມືອງທີ່ເຮັດທົດລອງສາມສ້າງ ໃນຈຳນວນ 51 ເມືອງ ໃນທົ່ວປະເທດ.

3. **ຫລັກການໃນການປັບປຸງບູລະນະກົງຈັກການຈັດຕັ້ງຢູ່ຂັ້ນເມືອງ**

3.1 ກົງຈັກການຈັດຕັ້ງ ຕ້ອງກະທັດຮັດ, ສົມເຫດສົມຜົນ, ມີປະສິດທິຜົນ, ມີຄວາມສັກສິດ, ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງຂອງລັດ ໃນທົ່ວພື້ນທີ່ຂອງເມືອງ ແລະ ທັງຮັບປະກັນຄວາມເປັນເອກະພາບຂອງຂະແໜງການສາຍຕັ້ງ ແລະ ສາຍຂວາງ;

3.2 ກົງຈັກການຈັດຕັ້ງຂອງຂະແໜງການສາຍຕັ້ງ ແລະ ສາຍຂວາງ ຂອງເມືອງ ເປັນເອກະພາບກັບຂະແໜງການກ່ຽວຂ້ອງ ພາຍໃຕ້ການຄຸ້ມຄອງຂອງອົງການປົກຄອງຂັ້ນເມືອງ;

3.3 ສອດຄ່ອງກັບຈຸດພິເສດ, ເງື່ອນໄຂ, ສະພາບການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະທ້ອງຖິ່ນ (ເມືອງ) ແລະ ສອດຄ່ອງກັບທິດການປັບປຸງກົງຈັກການຈັດຕັ້ງ;

3.4 ຮັບປະກັນຄວາມຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບການຕ່າງໆ ໃນການຄົ້ນຄວ້າການປັບປຸງລະບົບກົງຈັກການຈັດຕັ້ງ.

## 4. ທີ່ຕັ້ງ ແລະ ພາລະບົດບາດຂອງບັນດາຫ້ອງການຂະແໜງການສາຍຕັ້ງ ແລະ ສາຍຂວາງຂອງເມືອງ

### 4.1 ຫ້ອງການຂອງຂະແໜງການສາຍຕັ້ງ

ຫ້ອງການຂອງຂະແໜງການສາຍຕັ້ງຢູ່ຂັ້ນເມືອງ ແມ່ນໂຄງປະກອບກົງຈັກການຈັດຕັ້ງຂອງອົງການປົກຄອງເມືອງ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ອົງການປົກຄອງເມືອງ ໃນການຈັດຕັ້ງປະຕິບັດໜ້າທີ່ຄຸ້ມຄອງບໍລິຫານລັດຢູ່ຂັ້ນເມືອງ, ຮ່ວມຊີວິດການເມືອງຢູ່ເມືອງ ແລະ ປະຕິບັດໜ້າທີ່ວຽກງານວິຊາສະເພາະ ຕາມຂະແໜງການສາຍຕັ້ງທີ່ກ່ຽວຂ້ອງ.

### 4.2 ຫ້ອງການສາຍຂວາງ

ຫ້ອງການສາຍຂວາງ ແມ່ນຫ້ອງການອ້ອມຂ້າງເມືອງ ຊຶ່ງເປັນໂຄງປະກອບກົງຈັກການຈັດຕັ້ງຂອງອົງການປົກຄອງເມືອງ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະພັກ ແລະ ອົງການປົກຄອງເມືອງ ໃນການອຳນວຍຄວບຄຸມການຈັດຕັ້ງປະຕິບັດໜ້າທີ່ຄຸ້ມຄອງບໍລິຫານລັດ ຢູ່ພາຍໃນເມືອງ.

## 5. ໜ້າທີ່ ແລະ ຂອບເຂດສິດຂອງບັນດາຫ້ອງການຂະແໜງການສາຍຕັ້ງ ແລະ ສາຍຂວາງຂອງເມືອງ

ສຳລັບໜ້າທີ່ ແລະ ຂອບເຂດສິດ ຂອງບັນດາຫ້ອງການຂະແໜງການສາຍຕັ້ງ ແລະ ສາຍຂວາງຂອງເມືອງ ແມ່ນປະຕິບັດຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງຂະແໜງການ ແລະ ອົງການຂອງຕົນ, ຖ້າວ່າຫ້ອງການຂະແໜງການໃດ ຫຼື ຫ້ອງການອົງການໃດ ຫາກເຫັນວ່າພາລະບົດບາດ, ໜ້າທີ່ ຍັງບໍ່ທັນຈະແຈ້ງ, ກ້າວກ່າຍກັບພາກສ່ວນອື່ນ ແລະ ສ້າງຄວາມຫຍຸ້ງຍາກໃນການເຄື່ອນໄຫວວຽກງານ ໃຫ້ສະເໜີຫາອົງການປົກຄອງເມືອງ ເພື່ອພິຈາລະນາປັບປຸງແກ້ໄຂ ໃຫ້ສອດຄ່ອງ ແລະ ທັນເວລາ.

## 6. ໂຄງປະກອບກົງຈັກການຈັດຕັ້ງຂອງເມືອງ

ເພື່ອເຮັດໃຫ້ກົງຈັກການຈັດຕັ້ງຂອງເມືອງທົດລອງ ເປັນລະບົບຄົບຊຸດ, ມີຄວາມເຂັ້ມແຂງຮອບດ້ານ ແລະ ເຄື່ອນໄຫວຢ່າງມີປະສິດທິຜົນ ຄວນກຳນົດໂຄງປະກອບກົງຈັກ ດັ່ງນີ້:

**1. ບັນດາຫ້ອງການຂອງຂະແໜງການສາຍຕັ້ງ ປະກອບມີ:**

1.1 ກອງບັນຊາການທະຫານ;

1.2 ກອງບັນຊາການຕຳຫຼວດ;

1.3 ຫ້ອງການ ຍຸຕິທຳ;

1.4 ຫ້ອງການ ພາຍໃນ;

1.5 ຫ້ອງການ ສຶກສາທິການ ແລະ ກິລາ;

1.6 ຫ້ອງການ ສາທາລະນະສຸກ;

1.7 ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

1.8 ຫ້ອງການ ແຮງງານ ແລະ ສະຫວັດດີການສັງຄົມ;

1.9 ຫ້ອງການ ແຜນການ ແລະ ການລົງທຶນ;

1.10 ຫ້ອງການ ການເງິນ;

1.11 ຫ້ອງການ ກະສິກຳ ແລະ ປ່າໄມ້;

1.12 ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

1.13 ຫ້ອງການ ອຸດສາຫະກຳ ແລະ ການຄ້າ;

1.14 ຫ້ອງການ ໂຍທາທິການ ແລະ ຂົນສົ່ງ;

ສຳລັບວຽກງານພະລັງງານ ແລະ ບໍ່ແຮ່; ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ; ວິທະຍາສາດ ແລະ ເຕັກໂນໂລຊີ; ການພົວພັນຕ່າງປະເທດ ແລະ ວຽກງານອື່ນໆ ຖ້າມີຄວາມຈຳເປັນກໍສາມາດຈັດຕັ້ງເປັນຫ້ອງການໄດ້ໂດຍອີງຕາມສະພາບ ແລະ ຈຸດພິເສດຕົວຈິງຂອງເມືອງ ໂດຍແມ່ນຄວາມຮັບຜິດຊອບຂອງເຈົ້າເມືອງ ແລະ ໄດ້ຮັບຄວາມເຫັນດີຈາກກະຊວງທີ່ກ່ຽວຂ້ອງ. ໃນກໍລະນີບໍ່ໄດ້ຈັດຕັ້ງເປັນຫ້ອງການສະເພາະ, ວຽກງານສາຍຕັ້ງເຫຼົ່ານີ້ ໃຫ້ເປັນໜ່ວຍງານໜຶ່ງຂຶ້ນກັບຫ້ອງວ່າການປົກຄອງເມືອງ ແລະ ດ້ານວິຊາການຢູ່ພາຍໃຕ້ການຊີ້ນຳຂອງກະຊວງກ່ຽວຂ້ອງ.

## 2. ກົງຈັກທີ່ຂຶ້ນໂດຍກົງກັບກະຊວງ

2.1 ຫ້ອງການສ່ວຍສາອາກອນ;

2.2 ຫ້ອງການຄັງເງິນ;

2.3 ພາສີເຂດ;

2.4 ສູນສະຖິຕິ.

## 3. ຫ້ອງການສາຍຂວາງຂັ້ນເມືອງ

3.1 ຫ້ອງວ່າການປົກຄອງເມືອງ;

3.2 ຄະນະຈັດຕັ້ງເມືອງ;

3.3 ຫ້ອງການກວດກາພັກ-ລັດເມືອງ;

3.4 ຄະນະໂຄສະນາອົບຮົມເມືອງ;

3.5 ແນວລາວສ້າງຊາດເມືອງ;

3.6 ສະຫະພັນນັກຮົບເກົ່າເມືອງ.

3.7 ຄະນະບໍລິຫານງານ ຊປປ ລາວ ເມືອງ;

3.8 ສະຫະພັນແມ່ຍິງເມືອງ;

3.9 ສະຫະພັນກຳມະບານເມືອງ;

ສ່ວນການຈັດຕັ້ງກົງຈັກຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ແລະວຽກງານອື່ນໆ ແມ່ນອີງໃສ່ສະພາບຕົວຈິງ ແລະ ການກໍານົດຂອງກົດໝາຍກ່ຽວຂ້ອງ.

7. **ການປັບປຸງການຕໍາແໜ່ງງານຂອງບັນດາຫ້ອງການຂະແໜງການສາຍຕັ້ງ ແລະ ຫ້ອງການສາຍຂວາງ**

ມອບໃຫ້ກະຊວງລົມທົບກັບອົງການປົກຄອງທ້ອງຖິ່ນ ປັບປຸງກໍານົດຕໍາແໜ່ງງານຂອງຫ້ອງການຂະແໜງການຕົນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງຂອງເມືອງ ແລະ ຈັດສັນຕົວເລກລັດຖະກອນໃໝ່ ທີ່ໄດ້ຮັບໃນສົກປີ 2012-2013 ໃຫ້ແກ່ຫ້ອງການດັ່ງກ່າວ ຢູ່ເມືອງ ທີ່ເຮັດທົດລອງຢ່າງເໝາະສົມ. ສ່ວນບັນດາຫ້ອງການສາຍຂວາງ ແມ່ນມອບໃຫ້ອົງການປົກຄອງເມືອງກວດກາ ແລະ ປັບປຸງການກໍານົດຕໍາແໜ່ງງານໃຫ້ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະເມືອງ.

8. **ການຈັດຕັ້ງປະຕິບັດ**

8.1 ຄະນະພັກ, ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ອົງການຈັດຕັ້ງທຸກຂັ້ນທຸກຂະແໜງການຕ້ອງກໍາແໜ້ນບັນດາມະຕິກໍາຂອງພັກ ແລະ ລັດຖະບານ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ;

8.2 ຄະນະພັກ, ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ ຖືເອົາເອົາວຽກງານປັບປຸງກົງຈັກຂັ້ນເມືອງ ເປັນວຽກງານບຸລິມະສິດ ໃນການເຄື່ອນໄຫວວຽກງານຂອງຕົນ;

8.3 ການຈັດຕັ້ງ ແລະ ການເຄື່ອນໄຫວ ຕ້ອງຂໍທິດຊີ້ນໍາຈາກອົງການປົກຄອງຂັ້ນເທິງ, ສະຫລຸບສ່ອງແສງລາຍງານ, ປະເມີນຜົນ ແລະ ຖອດຖອນບົດຮຽນເປັນແຕ່ລະໄລຍະ.

9. **ງົບປະມານ**

ອົງການປົກຄອງເມືອງ ແນະນໍາໃຫ້ບັນດາຫ້ອງການຂະແໜງການສາຍຕັ້ງ ແລະ ຫ້ອງການສາຍຂວາງ ຂຶ້ນແຜນງົບປະມານສະເພາະຂອງຕົນ ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຢ່າງມີປະສິດທິຜົນ.

10. **ຜົນສັກສິດ**

ຄໍາແນະນໍາສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ,
ຫົວໜ້າຄະນະປັບປຸງກົງຈັກການຈັດຕັ້ງລັດຖະບານ

ອາຊາງ ລາວລີ